ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 83 /ລບ
ນະຄອນຫຼວງວຽງຈັນ, ວັນທີ 16.01.2024

# ດຳລັດ
# ວ່າດ້ວຍກອງທຶນນ້ຳມັນເຊື້ອໄຟ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1340/ອຄ, ລົງວັນທີ 16 ສິງຫາ 2023.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງ, ນຳໃຊ້ ແລະ ຕິດຕາມ ກວດກາ ກອງທຶນນ້ຳມັນເຊື້ອໄຟ ເພື່ອໃຫ້ມີທຶນ ແລະ ນຳໃຊ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ເຂົ້າໃນການດັດສົມລາຄາ ນ້ຳມັນເຊື້ອໄຟ ແນໃສ່ຮັກສາສະຖຽນລະພາບທາງດ້ານລາຄານ້ຳມັນເຊື້ອໄຟ ແລະ ຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ພຽງພໍແກ່ສັງຄົມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ກອງທຶນນ້ຳມັນເຊື້ອໄຟ**

ກອງທຶນນ້ຳມັນເຊື້ອໄຟ ຂຽນຫຍໍ້ ເປັນພາສາລາວ "ກທນ" ເປັນພາສາອັງກິດວ່າ "Fuel Fund" ແມ່ນກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອສະສົມທຶນຈາກແຫຼ່ງຕ່າງໆ ນຳໃຊ້ເຂົ້າໃນການດັດສົມລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ໂດຍຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາ ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ນ້ຳມັນເຊື້ອໄຟ** ໝາຍເຖິງ ຜະລິດຕະພັນນ້ຳມັນ ຊຶ່ງປະກອບດ້ວຍ ນ້ຳມັນແອັດຊັງພິເສດ, ນ້ຳມັນແອັດຊັງທຳມະດາ, ນ້ຳມັນກາຊວນ, ນ້ຳມັນກາດເຮືອບິນ, ນ້ຳມັນກາດໄຕ້, ນ້ຳມັນເຕົາ, ນ້ຳມັນຊີວະພາບ ແລະ ນ້ຳມັນເຊື້ອໄຟອື່ນ;

2. **ລາຄາຂາຍຍ່ອຍ** ໝາຍເຖິງ ລາຄາຂາຍນ້ຳມັນເຊື້ອໄຟໜ້າປ້ຳ ໃນປັດຈຸບັນ ຊຶ່ງຄິດໄລ່ຕາມໂຄງປະກອບລາຄານ້ຳມັນເຊື້ອໄຟ ເພື່ອເປັນພື້ນຖານ ໃນການຄິດໄລ່ດັດສົມລາຄານ້ຳມັນເຊື້ອໄຟ;

3. **ໂຄງປະກອບລາຄານ້ຳມັນເຊື້ອໄຟ** ໝາຍເຖິງ ການກຳນົດເອົາບັນດາປັດໃຈ, ອົງປະກອບຕ່າງໆ ຂອງລາຄາສິນຄ້າ ແລະ ການບໍລິການ ເພື່ອເປັນບ່ອນອີງໃຫ້ແກ່ການກຳນົດລາຄາ ຊຶ່ງປະກອບດ້ວຍ ຕົ້ນທຶນການຜະລິດ ຫຼື ຕົ້ນທຶນການຊື້, ຕົ້ນທຶນການບໍລິການ, ຕົ້ນທຶນການຈໍລະຈອນ, ຜົນກຳໄລ ແລະ ພັນທະຂອງລັດ;

4. **ເງິນຊົດເຊີຍ** ໝາຍເຖິງ ຈຳນວນເງິນ ທີ່ ກທນ ຈະທົດແທນໃຫ້ ຜູ້ນຳເຂົ້າ ແລະ ຜູ້ປຸງແຕ່ງ ນ້ຳມັນເຊື້ອໄຟ ພາຍໃນປະເທດ ຊຶ່ງໄດ້ມີການກຳນົດການເກັບ ແລະ ການຊົດເຊີຍ ເປັນແຕ່ລະກໍລະນີ.

**ມາດຕາ 4 ຫຼັກການ ການຄຸ້ມຄອງ ແລະ ນຳໃຊ້ ກອງທຶນນ້ຳມັນເຊື້ອໄຟ**

ການຄຸ້ມຄອງ ແລະ ນຳໃຊ້ ກທນ ໃຫ້ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ລວມສູນ ແລະ ເປັນເອກະພາບ ຕາມລະບົບບັນຊີແຫ່ງລັດ;
2. ຮັບປະກັນ ການນຳໃຊ້ ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ມີປະສິດທິພາບ ແລະ ປະສິດທິຜົນ;
3. ຮັບປະກັນ ໃຫ້ມີຄວາມຄ່ອງຕົວ, ຍຸຕິທຳ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ວ່ອງໄວ, ທັນການ ແລະ ສາມາດກວດສອບໄດ້;
4. ທຸກລາຍຮັບ-ລາຍຈ່າຍ ຕ້ອງຜ່ານລະບົບການບັນຊີ ພ້ອມທັງມີການຕິດຕາມ, ກວດກາ ແລະ ກວດສອບ ຢ່າງເປັນປົກກະຕິ ຕາມກົດໝາຍ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບ ກທນ ຢູ່ ສປປ ລາວ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ເປົ້າໝາຍການນຳໃຊ້ ກອງທຶນນ້ຳມັນເຊື້ອໄຟ

**ມາດຕາ 6 ແຫຼ່ງລາຍຮັບຂອງກອງທຶນນ້ຳມັນເຊື້ອໄຟ**

ລາຍຮັບຂອງ ກທນ ມາຈາກແຫຼ່ງ ດັ່ງນີ້:

1. ການປະກອບສ່ວນ ງົບປະມານຂອງລັດ;
2. ການເກັບ ຈາກຜູ້ນຳເຂົ້າ ແລະ ຜູ້ປຸງແຕ່ງ ນ້ຳມັນເຊື້ອໄຟ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງດຳລັດສະບັບນີ້;
3. ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
4. ດອກເບ້ຍເງິນຝາກ ແລະ ລາຍຮັບຈາກການບໍລິຫານກອງທຶນ.

**ມາດຕາ 7 ເປົ້າໝາຍການນຳໃຊ້ກອງທຶນນ້ຳມັນເຊື້ອໄຟ**

ກທນ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການດັດສົມລາຄານ້ຳມັນເຊື້ອໄຟ;
2. ການໃຊ້ຈ່າຍບໍລິຫານ ກທນ.

ໃນກໍລະນີມີທຶນພຽງພໍໃນການດັດສົມລາຄານ້ຳມັນເຊື້ອໄຟ ກໍສາມາດນຳໃຊ້ ກທນ ເພື່ອລົງທຶນໃນກິດຈະການທີ່ມີຄວາມສ່ຽງຕ່ຳ ຕາມການຕົກລົງຂອງສະພາບໍລິຫານກອງທຶນ.

**ມາດຕາ 8 ການໃຊ້ຈ່າຍບໍລິຫານ ກອງທຶນນ້ຳມັນເຊື້ອໄຟ**

ການໃຊ້ຈ່າຍບໍລິຫານ ກທນ ເຂົ້າໃນວຽກງານບໍລິຫານ ໃນແຕ່ລະປີ ບໍ່ເກີນ 0,1% (ສູນຈຸດໜຶ່ງ ສ່ວນຮ້ອຍ) ຕາມເງິນສະສົມ ຂອງ ກທນ ໃນປີຜ່ານມາ ຊຶ່ງການໃຊ້ຈ່າຍ ຂຶ້ນກັບແຜນການເຄື່ອນໄຫວ ຕົວຈິງ ໂດຍການພິຈາລະນາ ແລະ ອະນຸມັດ ຈາກສະພາບໍລິຫານ ກທນ.

**ມາດຕາ 9 ການຖອນເງິນ ກອງທຶນນ້ຳມັນເຊື້ອໄຟ**

ການຖອນເງິນ ກທນ ຕ້ອງຖອນເງິນ ອອກຈາກບັນຊີເງິນຝາກ ຂອງ ກທນ ຢູ່ຄັງເງິນແຫ່ງຊາດ ຫຼື ທະນາຄານທຸລະກິດ ທີ່ຖືກຮັບຮອງໂດຍສະພາບໍລິຫານ ກທນ ໂດຍຖືກຕ້ອງ ຕາມລະບຽບການຂອງ ກທນ ແລະ ລະບຽບການຂອງກະຊວງການເງິນ.

ການຖອນເງິນຂອງກອງທຶນ ບໍ່ສາມາດຖອນອອກໄດ້ທັງໝົດ ແລະ ຕ້ອງຮັກສາໄວ້ 30% (ສາມສິບສ່ວນຮ້ອຍ) ໃນບັນຊີເງິນຝາກ ຂອງ ກທນ.

## ໝວດທີ 3
## ການດັດສົມລາຄານ້ຳມັນເຊື້ອໄຟ

**ມາດຕາ 10 ການດັດສົມລາຄານ້ຳມັນເຊື້ອໄຟ**

ການດັດສົມລາຄານ້ຳມັນເຊື້ອໄຟ ແມ່ນ ການຮັກສາສະຖຽນລະພາບລາຄານ້ຳມັນເຊື້ອໄຟ ບໍ່ໃຫ້ ຂຶ້ນສູງ ຫຼື ຫຼຸດລົງ ຫຼາຍເກີນໄປ ໂດຍການປັບລາຄາຂາຍຍ່ອຍ ດ້ວຍການ ເພີ່ມ ຫຼື ຫຼຸດ ອັດຕາການເກັບເງິນເຂົ້າ ກທນ ແລະ ຈ່າຍເງິນຊົດເຊີຍ ຂອງ ກທນ.

**ມາດຕາ 11 ການເກັບເງິນເຂົ້າ ກອງທຶນນ້ຳມັນເຊື້ອໄຟ**

ການເກັບເງິນເຂົ້າ ກທນ ສຳລັບການນຳເຂົ້ານ້ຳມັນເຊື້ອໄຟ ເພື່ອຈຳໜ່າຍ ຫຼື ປຸງແຕ່ງ ເລີ່ມຕົ້ນເກັບໂດຍ 300 ກີບ ຕໍ່ລິດ ແລະ ຫຼັງຈາກນັ້ນ ໃຫ້ເກັບ ຕາມກໍລະນີ ດັ່ງນີ້:

1. ລາຄາຂາຍຍ່ອຍ ຫຼຸດລົງ ບໍ່ເກີນ 2,50% (ສອງຈຸດຫ້າສິບ ສ່ວນຮ້ອຍ) ໃຫ້ເກັບຕາມອັດຕາ ທີ່ເກັບຄັ້ງລ້າສຸດ ແລະ ໃຫ້ປັບ ລາຄານ້ຳມັນເຊື້ອໄຟລົງ;
2. ລາຄາຂາຍຍ່ອຍ ຫຼຸດລົງ ແຕ່ 2,51% (ສອງຈຸດຫ້າສິບເອັດ ສ່ວນຮ້ອຍ) ຫາ 4,50% (ສີ່ຈຸດຫ້າສິບ ສ່ວນຮ້ອຍ) ໃຫ້ເກັບຕາມອັດຕາ ທີ່ເກັບຄັ້ງລ້າສຸດ ແລະ ໃຫ້ເກັບເພີ່ມ 50% (ຫ້າສິບ ສ່ວນຮ້ອຍ) ຂອງລາຄາຜົດຕ່ຽງ ແລະ ໃຫ້ປັບລາຄານ້ຳມັນເຊື້ອໄຟລົງ;
3. ລາຄາຂາຍຍ່ອຍ ຫຼຸດລົງ ແຕ່ 4,51% (ສີ່ຈຸດຫ້າສິບເອັດ ສ່ວນຮ້ອຍ) ຫາ 6,50% (ຫົກຈຸດຫ້າສິບ ສ່ວນຮ້ອຍ) ໃຫ້ເກັບຕາມອັດຕາ ທີ່ເກັບຄັ້ງລ້າສຸດ ແລະ ໃຫ້ເກັບເພີ່ມ 60% (ຫົກສິບ ສ່ວນຮ້ອຍ) ຂອງລາຄາຜົດຕ່ຽງ ແລະ ໃຫ້ປັບລາຄານ້ຳມັນເຊື້ອໄຟລົງ;
4. ລາຄາຂາຍຍ່ອຍ ຫຼຸດລົງ ແຕ່ 6,51% (ຫົກຈຸດຫ້າສິບເອັດ ສ່ວນຮ້ອຍ) ຫາ 8,50% (ແປດຈຸດຫ້າສິບ ສ່ວນຮ້ອຍ) ໃຫ້ເກັບຕາມອັດຕາ ທີ່ເກັບຄັ້ງລ້າສຸດ ແລະ ໃຫ້ເກັບເພີ່ມ 70% (ເຈັດສິບ ສ່ວນຮ້ອຍ) ຂອງລາຄາຜົດຕ່ຽງ ແລະ ໃຫ້ປັບລາຄານ້ຳມັນເຊື້ອໄຟລົງ;
5. ລາຄາຂາຍຍ່ອຍ ຫຼຸດລົງ ຫຼາຍກວ່າ 8,50% (ແປດຈຸດຫ້າສິບ ສ່ວນຮ້ອຍ) ໃຫ້ສະພາບໍລິຫານ ກທນ ຄົ້ນຄວ້າ ແລະ ລາຍງານ ຕໍ່ລັດຖະບານ ພິຈາລະນາ.

ສຳລັບການປຸງແຕ່ງ ຢູ່ພາຍໃນປະເທດ ທີ່ໄດ້ປະລິມານນ້ຳມັນເຊື້ອໄຟ ເພີ່ມຂຶ້ນນັ້ນ ໃຫ້ເກັບເງິນເຂົ້າ ກທນ ໃນສ່ວນທີ່ເພີ່ມຂຶ້ນ.

**ມາດຕາ 12 ການຫຼຸດ ແລະ ການຈ່າຍເງິນຊົດເຊີຍ ຂອງກອງທຶນນ້ຳມັນເຊື້ອໄຟ**

ການຫຼຸດ ການເກັບເງິນ ແລະ ການຈ່າຍເງິນຊົດເຊີຍ ຂອງ ກທນ ສຳລັບການນຳເຂົ້ານ້ຳມັນເຊື້ອໄຟ ເພື່ອຈຳໜ່າຍ ຫຼື ປຸງແຕ່ງ ໃຫ້ອີງໃສ່ລາຄາຂາຍຍ່ອຍ ໂດຍຈ່າຍຕາມກໍລະນີ ດັ່ງນີ້:

1. ລາຄາຂາຍຍ່ອຍ ເພີ່ມຂຶ້ນ ແຕ່ 2,51% (ສອງຈຸດຫ້າສິບເອັດ ສ່ວນຮ້ອຍ) ຫາ 4,50% (ສີ່ຈຸດຫ້າສິບ ສ່ວນຮ້ອຍ) ໃຫ້ຫຼຸດອັດຕາການ ເກັບເງິນ ກທນ ຈົນກວ່າ ອັດຕາການເກັບ ຈະເທົ່າກັບ 300 ກີບ ຕໍ່ລິດ ແຕ່ຫາກບໍ່ສາມາດດັດສົມລາຄາໄດ້ ໃຫ້ຈ່າຍເງິນຊົດເຊີຍ ເພື່ອໃຫ້ໄດ້ໃນອັດຕາ 50% (ຫ້າສິບ ສ່ວນຮ້ອຍ) ຂອງລາຄາຜົດດ່ຽງ ທີ່ເພີ່ມຂຶ້ນ;

2. ລາຄາຂາຍຍ່ອຍ ເພີ່ມຂຶ້ນ ແຕ່ 4,51% (ສີ່ຈຸດຫ້າສິບເອັດ ສ່ວນຮ້ອຍ) ຫາ 6,50% (ຫົກຈຸດຫ້າສິບ ສ່ວນຮ້ອຍ) ໃຫ້ຫຼຸດອັດຕາການ ເກັບເງິນ ກທນ ຈົນກວ່າ ອັດຕາການເກັບ ຈະເທົ່າກັບ 300 ກີບ ຕໍ່ລິດ ແຕ່ຫາກບໍ່ສາມາດດັດສົມລາຄາໄດ້ ໃຫ້ຈ່າຍເງິນຊົດເຊີຍ ເພື່ອໃຫ້ໄດ້ໃນອັດຕາ 60% (ຫົກສິບ ສ່ວນຮ້ອຍ) ຂອງລາຄາຜົດດ່ຽງ ທີ່ເພີ່ມຂຶ້ນ;

3. ລາຄາຂາຍຍ່ອຍ ເພີ່ມຂຶ້ນ ແຕ່ 6,51% (ຫົກຈຸດຫ້າສິບເອັດ ສ່ວນຮ້ອຍ) ຫາ 8,50% (ແປດຈຸດຫ້າ ສິບ ສ່ວນຮ້ອຍ) ໃຫ້ຫຼຸດອັດຕາການ ເກັບເງິນ ກທນ ຈົນກວ່າ ອັດຕາການເກັບ ຈະເທົ່າກັບ 300 ກີບ ຕໍ່ລິດ ແຕ່ຫາກບໍ່ສາມາດດັດສົມລາຄາໄດ້ ໃຫ້ຈ່າຍເງິນຊົດເຊີຍ ເພື່ອໃຫ້ໄດ້ໃນອັດຕາ 70% (ເຈັດສິບ ສ່ວນຮ້ອຍ) ຂອງລາຄາຜົດດ່ຽງ ທີ່ເພີ່ມຂຶ້ນ;

4. ລາຄາຂາຍຍ່ອຍ ເພີ່ມຂຶ້ນ ຫຼາຍກວ່າ 8,50% (ແປດຈຸດຫ້າສິບ ສ່ວນຮ້ອຍ) ໃຫ້ສະພາບໍລິຫານ ກທນ ຄົ້ນຄວ້າ ແລະ ລາຍງານ ຕໍ່ລັດຖະບານ ພິຈາລະນາ.

ສຳລັບການປຸງແຕ່ງ ຢູ່ພາຍໃນປະເທດ ທີ່ໄດ້ປະລິມານນ້ຳມັນເຊື້ອໄຟ ເພີ່ມຂຶ້ນນັ້ນ ໃຫ້ຈ່າຍເງິນຊົດເຊີຍ ກທນ ໃນສ່ວນທີ່ເພີ່ມຂຶ້ນ.

**ມາດຕາ 13 ເງື່ອນໄຂຂອງການຮັບເງິນຊົດເຊີຍ ຈາກກອງທຶນນ້ຳມັນເຊື້ອໄຟ**

ຜູ້ນຳເຂົ້າ ແລະ ຜູ້ປຸງແຕ່ງ ນ້ຳມັນເຊື້ອໄຟ ທີ່ຈະໄດ້ຮັບການຈ່າຍເງິນຊົດເຊີຍ ຈາກ ກທນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ;
2. ເປີດບັນຊີເງິນຝາກ ນຳທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ;
3. ປະກອບເອກະສານ ຕາມແບບພິມ ທີ່ ກທນ ກຳນົດ.

ກະຊວງອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບ ກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າກຳນົດ ຂັ້ນຕອນ ແລະ ວິທີການ ລະອຽດ ໃນການຊົດເຊີຍ ໃຫ້ມີຄວາມວ່ອງໄວ ແລະ ທັນການ.

## ໝວດທີ 4
## ການຄຸ້ມຄອງບໍລິຫານກອງທຶນນ້ຳມັນເຊື້ອໄຟ

**ມາດຕາ 14 ໂຄງປະກອບການຈັດຕັ້ງ ຂອງກອງທຶນນ້ຳມັນເຊື້ອໄຟ**

ໂຄງປະກອບການຈັດຕັ້ງ ຂອງ ກທນ ປະກອບດ້ວຍ:

1. ສະພາບໍລິຫານ ກທນ;

2. ກອງເລຂາ ກທນ.

**ມາດຕາ 15 ສະພາບໍລິຫານ ກອງທຶນນ້ຳມັນເຊື້ອໄຟ**

ສະພາບໍລິຫານ ກທນ ເປັນອົງການບໍລິຫານສູງສຸດ ຂອງ ກທນ, ເປັນອົງການທີ່ບໍ່ປະຈຳການ ມີພາລະບົດບາດ ໃນການຊີ້ນຳ, ນຳພາ ແລະ ຕິດຕາມ ກວດກາ ການຄຸ້ມຄອງບໍລິຫານ ກທນ.

ສະມາຊິກສະພາບໍລິຫານ ກທນ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ສະພາບໍລິຫານ ກທນ ມີວາລະ ການບໍລິຫານ ກທນ ຫ້າປີ.

**ມາດຕາ 16 ໂຄງປະກອບບຸກຄະລາກອນ ຂອງສະພາບໍລິຫານ**

ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານ ກທນ ປະກອບດ້ວຍ:

1. ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນປະທານ;
2. ຮອງລັດຖະມົນຕີ ກະຊວງການເງິນ ເປັນຮອງປະທານ;
3. ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະການຄ້າ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
4. ຫົວໜ້າ ກົມພາສີ ກະຊວງການເງິນ ເປັນຄະນະ;
5. ຫົວໜ້າ ກົມງົບປະມານແຫ່ງລັດ ກະຊວງການເງິນ ເປັນຄະນະ;
6. ປະທານ ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດລາວ ເປັນຄະນະ;
7. ຫົວໜ້າ ກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ ທັງເປັນຫົວໜ້າກອງເລຂາ.

ໂຄງປະກອບບຸກຄະລາກອນ ຂອງສະພາບໍລິຫານ ກທນ ສາມາດ ປັບປຸງ ແລະ ປ່ຽນແປງ ຕາມຄວາມຈຳເປັນ ໂດຍການຕົກລົງເຫັນດີຂອງນາຍົກລັດຖະມົນຕີ.

ສະມາຊິກຂອງສະພາບໍລິຫານ ກທນ ຈະບໍ່ໄດ້ຮັບເງິນເດືອນ ໃນການປະຕິບັດໜ້າທີ່ຂອງຕົນ ແຕ່ຈະໄດ້ຮັບເບ້ຍປະຊຸມ ແລະ ນະໂຍບາຍ ຕາມລະບຽບການຄຸ້ມຄອງ ກທນ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ**

ສະພາບໍລິຫານ ກທນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດ ນະໂຍບາຍ, ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ການເຄື່ອນໄຫວ ຂອງ ກທນ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ລະບຽບການ ກ່ຽວກັບ ການຄຸ້ມຄອງ ແລະ ການເຄື່ອນໄຫວ ຂອງ ກທນ ໃຫ້ພາກສ່ວນທີ່ກ່ຽວຂ້ອງ;
3. ພິຈາລະນາ ຮັບຮອງ ແຜນການເຄື່ອນໄຫວ, ແຜນງົບປະມານ ປະຈຳປີ ຂອງ ກທນ;
4. ພິຈາລະນາ ຮັບຮອງ ບົດລາຍງານການເງິນ ຂອງ ກທນ;
5. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ກອງເລຂາ ກທນ;
6. ຄົ້ນຄວ້າ ລາຄານ້ຳມັນເຊື້ອໄຟ ຫາກເພີ່ມຂຶ້ນ ຫຼື ຫຼຸດລົງ ຫຼາຍກວ່າ 8,50% (ແປດຈຸດຫ້າສິບສ່ວນຮ້ອຍ) ຂອງລາຄາຂາຍຍ່ອຍ ເພື່ອສະເໜີ ລັດຖະບານ ພິຈາລະນາ;
7. ຊີ້ນຳ ແລະ ຕິດຕາມ ກວດກາ ການເຄື່ອນໄຫວຂອງກອງເລຂາ ກທນ;

8. ຮັບຜິດຊອບ ຕໍ່ຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຄຸ້ມຄອງ ກທນ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ກທນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18 ກອງປະຊຸມສະພາບໍລິຫານ ກອງທຶນນໍ້າມັນເຊື້ອໄຟ**

ກອງປະຊຸມສະໄໝສາມັນ ຂອງສະພາບໍລິຫານ ກທນ ຈັດຂຶ້ນ ຢ່າງໜ້ອຍ ສອງຄັ້ງ ຕໍ່ປີ, ໃນກໍລະນີຈໍາເປັນ ແລະ ຮີບດ່ວນ ສາມາດເປີດກອງປະຊຸມສະໄໝວິສາມັນ ຂຶ້ນໄດ້ ຊຶ່ງຕ້ອງມີສະມາຊິກຂອງສະພາບໍລິຫານ ກທນ ເຂົ້າຮ່ວມ ຢ່າງໜ້ອຍ ສອງສ່ວນສາມຂຶ້ນໄປ ຈຶ່ງສາມາດເປີດປະຊຸມໄດ້. ມະຕິຂອງກອງປະຊຸມສະພາບໍລິຫານ ກທນ ຈະມີຜົນໃຊ້ໄດ້ກໍຕໍ່ເມື່ອ ມີຄະແນນສຽງສ່ວນຫຼາຍ ຮັບຮອງເອົາ.

ໃນກໍລະນີ ປະທານ ບໍ່ຢູ່ ຫຼື ຕິດຂັດ ແມ່ນໃຫ້ຮອງປະທານ ຜູ້ທີ່ຖືກມອບໝາຍ ເປັນຜູ້ປະຕິບັດໜ້າທີ່ແທນ.

**ມາດຕາ 19 ກອງເລຂາ ກອງທຶນນໍ້າມັນເຊື້ອໄຟ**

ກອງເລຂາ ກທນ ແມ່ນ ການຈັດຕັ້ງທີ່ເຮັດໜ້າທີ່ປົກກະຕິ ແລະ ເປັນເສນາທິການ ໃຫ້ແກ່ສະພາບໍລິຫານ ກທນ ໃນການຄຸ້ມຄອງບໍລິຫານ ກທນ ໂດຍກໍານົດເອົາ ກົມການຄ້າພາຍໃນ ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຫ້ອງການກອງເລຂາ.

ກອງເລຂາ ກທນ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ວິຊາການຊ່ວຍວຽກ ຈໍານວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ໂດຍສະພາບໍລິຫານ ກທນ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງກອງເລຂາ ກອງທຶນນໍ້າມັນເຊື້ອໄຟ**

ກອງເລຂາ ກທນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ການເຄື່ອນໄຫວ ຂອງ ກທນ ເພື່ອສະເໜີ ສະພາບໍລິຫານ ພິຈາລະນາ;

2. ຄົ້ນຄວ້າສ້າງ ແຜນການເຄື່ອນໄຫວ, ແຜນງົບປະມານ ປະຈໍາປີ ຂອງ ກທນ ເພື່ອສະເໜີ ສະພາບໍລິຫານ ພິຈາລະນາ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ລະບຽບການ ກ່ຽວກັບ ການຄຸ້ມຄອງ ແລະ ການເຄື່ອນໄຫວ ຂອງ ກທນ ໃຫ້ພາກສ່ວນທີ່ກ່ຽວຂ້ອງ;

4. ຄຸ້ມຄອງບໍລິຫານ ກທນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

5. ຄົ້ນຄວ້າ ການດັດສົມລາຄານໍ້າມັນເຊື້ອໄຟ ແລະ ການຊົດເຊີຍ ເພື່ອສະເໜີ ປະທານ ສະພາບໍລິຫານ ກທນ ພິຈາລະນາ;

6. ຄົ້ນຄວ້າ ລາຄານໍ້າມັນເຊື້ອໄຟ ໃນກໍລະນີລາຄາຂາຍຍ່ອຍ ເພີ່ມຂຶ້ນ ຫຼື ຫຼຸດລົງ ຫຼາຍກວ່າ 8,50 % (ແປດຈຸດຫ້າສິບ ສ່ວນຮ້ອຍ) ເພື່ອສະເໜີ ສະພາບໍລິຫານ ພິຈາລະນາ;

7. ກວດກາຄວາມຖືກຕ້ອງ ຂອງເອກະສານຂໍຮັບເງິນຊົດເຊີຍ ຈາກຜູ້ນໍາເຂົ້າ ແລະ ຜູ້ປຸງແຕ່ງ ນໍ້າມັນເຊື້ອໄຟ;

8. ຖືບັນຊີ, ສະຫຼຸບ ແລະ ລາຍງານ ການເງິນ ໃຫ້ຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;

9. ຕິດຕາມ ກວດກາ ບໍລິມາດການນໍາເຂົ້າ, ການຜະລິດ, ປຸງແຕ່ງ ແລະ ການຈໍາໜ່າຍ ນໍ້າມັນເຊື້ອໄຟ;

10. ອະທິບາຍ, ຊີ້ແຈງຄວາມສົນໃຈ, ຂໍ້ຂ້ອງໃຈຂອງສັງຄົມ ກ່ຽວກັບ ກທນ;

11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ສະພາບໍລິຫານ ກທນ ຢ່າງເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານ ກທນ.

## ໝວດທີ 5
## ການເປີດບັນຊີ, ການກວດກາ, ການກວດສອບ ແລະ ການລາຍງານ

### ມາດຕາ 21 ການເປີດບັນຊີເງິນຝາກກອງທຶນນໍ້າມັນເຊື້ອໄຟ

ກທນ ຕ້ອງມີລະບົບການບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ສາມາດເປີດບັນຊີເງິນຝາກ ຢູ່ຄັງເງິນແຫ່ງຊາດ ຫຼື ທະນາຄານທຸລະກິດ ທີ່ມີຄວາມໝັ້ນຄົງ ແລະ ເຊື່ອຖືໄດ້ ຕາມການເຫັນດີຂອງກະຊວງການເງິນ.

ທຸກແຫຼ່ງລາຍຮັບຂອງ ກທນ ຕ້ອງໂອນເຂົ້າບັນຊີເງິນຝາກດັ່ງກ່າວ.

### ມາດຕາ 22 ການກວດກາ

ການກວດກາ ກທນ ແມ່ນ ການກວດກາການເຄື່ອນໄຫວ ແລະ ການຄຸ້ມຄອງບໍລິຫານ ຂອງ ກທນ ຊຶ່ງປະກອບດ້ວຍ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ແມ່ນ ການກວດກາ ທີ່ດໍາເນີນໄປຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາ ອັນແນ່ນອນ;

2. ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າ ມີຄວາມຈໍາເປັນ ໂດຍການແຈ້ງ ໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ;

3. ການກວດກາ ແບບກະທັນຫັນ ແມ່ນ ການກວດກາແບບຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງ ໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ.

### ມາດຕາ 23 ການກວດສອບ

ກທນ ຕ້ອງໄດ້ຮັບການກວດສອບທຸກປີ ໂດຍອົງການກວດສອບແຫ່ງລັດ ຊຶ່ງຜົນຂອງການກວດສອບ ຕ້ອງແຈ້ງໃຫ້ສາທາລະນະຊົນຮັບຮູ້. ໃນກໍລະນີຫາກພົບເຫັນການກະທໍາຜິດ ຕ້ອງຖືກດໍາເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ໃນກໍລະນີມີຄວາມຈໍາເປັນ ສາມາດໃຫ້ມີຜູ້ກວດສອບອິດສະລະໄດ້ ຕາມການສະເໜີຂອງສະພາບໍລິຫານ ກທນ.

### ມາດຕາ 24 ການລາຍງານ

ກອງເລຂາ ກທນ ຕ້ອງລາຍງານ ການຄຸ້ມຄອງບໍລິຫານກອງທຶນ ລວມທັງລາຍຮັບ-ລາຍຈ່າຍ ປະຈໍາທຸກເດືອນ ແລະ ປະຈໍາປີ ໃຫ້ສະພາບໍລິຫານ ກທນ ເພື່ອພິຈາລະນາ ລາຍງານຕໍ່ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງການເງິນ ແລະ ອົງການກວດສອບແຫ່ງລັດ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 25 ເຄື່ອງໝາຍ ແລະ ຕາປະທັບ**

ກອງທຶນນ້ຳມັນເຊື້ອໄຟ ມີ ເຄື່ອງໝາຍ ແລະ ຕາປະທັບເປັນຂອງຕົນ ເພື່ອຮັບໃຊ້ ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 26 ການຈັດຕັ້ງປະຕິບັດ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 27 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 28 ກຸມພາ 2024 ເປັນຕົ້ນໄປ.

**ຕາງໜ້າລັດຖະບານ**
**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

**ສອນໄຊ ສີພັນດອນ**